ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ ເລກທີ: 407 /ອຊ

ນະຄອນຫລວງວຽງຈັນ, ວັນທີ 4 ເມສາ 2024

# ໜັງສືແຈ້ງເຊີນການປະມູນສົມທຽບລາຄາ

**ເຖິງ:** ບັນດາບໍລິສັດອອກແບບ ແລະ ການພິມ

**ເລື່ອງ:** ເຊີນເຂົ້າຮ່ວມຍື່ນຊອງປະມູນສໍາລັບການອອກແບບ ແລະ ຜະລິດແຟ້ມເອກະສານ ສໍາລັບຈັດກອງປະຊຸມອາຊຽນ ຢູ່ ສປປ ລາວ ໃນປີ 2024.

- ອີງຕາມການເຫັນດີຂອງຄະນະນໍາກະຊວງການຕ່າງປະເທດ ລົງວັນທີ 30 ຕຸລາ 2023 ກ່ຽວກັບການເລີ່ມຂະບວນຈັດຊື້-ຈັດຈ້າງບາງໜ້າວຽກຮີບດ່ວນ ເພື່ອກະກຽມເປັນເຈົ້າພາບ ແລະ ປະທານອາຊຽນຂອງ ສປປ ລາວ ໃນປີ 2024;
- ອີງຕາມການເຫັນດີຂອງຄະນະນໍາກະຊວງການຕ່າງປະເທດ ລົງວັນທີ 1 ເມສາ 2024 ກ່ຽວກັບການພິມເພີ່ມເຄື່ອງໃຊ້ຫ້ອງການແບບລວມສູນ.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີຄວາມສາມາດ ແລະ ມີປະສົບປະການດ້ານການອອກແບບ ແລະ ຜະລິດແຟ້ມເອກະສານ ເຂົ້າຮ່ວມການປະມູນສົມທຽບລາຄາສໍາລັບການອອກແບບ ແລະ ຜະລິດແຟ້ມເອກະສານ ສໍາລັບຈັດກອງປະຊຸມອາຊຽນ ຢູ່ ສປປ ລາວ ໃນປີ 2024 ເພື່ອໃຫ້ສາມາດເລີ່ມນໍາໃຊ້ໃນວັນທີ 1 ມິຖຸນາ 2024 ເປັນຕົ້ນໄປ.

ການປະມູນຈະດໍາເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 5 ເມສາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 13:30 ໂມງ ຂອງວັນທີ 30 ເມສາ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 30 ເມສາ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານ ມາພ້ອມ.

ເຊັນແທນ ຫົວໜ້າກົມ
ຮອງຫົວໜ້າກົມ

ແສງພະອາທິດ ສະນຸກາຜົນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ
ກົມອາຊຽນ

ເລກທີ: 406 /ອຊ

ນະຄອນຫລວງວຽງຈັນ, ວັນທີ 4 ເມສາ 2024

# ເງື່ອນໄຂ ແລະ ຄຳແນະນຳສຳລັບຜູ້ເຂົ້າຮ່ວມປະມູນສົມທຽບລາຄາ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນການອອກແບບ ແລະ ຜະລິດແຟ້ມເອກະສານ ສຳລັບຈັດກອງປະຊຸມອາຊຽນ ຢູ່ ສປປ ລາວ ໃນປີ 2024 ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດຳເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊຳລະອາກອນທີ່ໃຊ້ໄດ້ເຖິງສົກປີ 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສຳຮອງຈາກທະນາຄານ);
6. ຕ້ອງມີເງິນຄ້ຳຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
7. ບໍລິສັດຕ້ອງມີຄວາມສາມາດ ແລະ ປະສົບການດ້ານນີ້ ຫຼື ປະສົບການວຽກທີ່ຄ້າຍຄືກັນນີ້ມາກ່ອນ ຢ່າງໜ້ອຍ 02 ປີ;
8. ບໍລິສັດຕ້ອງອອກແບບ ແລະ ຜະລິດແຟ້ມເອກະສານ ສຳລັບຈັດກອງປະຊຸມອາຊຽນ ຢູ່ ສປປ ລາວ ໃນປີ 2024 ໂດຍໃຫ້ມີກາໝາຍປະທານອາຊຽນຂອງ ສປປ ລາວ ແລະ ມີຂະໜາດ: 21.5 x 31 x 3 ຊມ, ພິມ 4ສີ 1ໜ້າ ດ້ວຍເຈ້ຍອາດມັນ 350ກຼ, ເຄືອບ PVC ແລະ ຕ້ອງສຳເລັດກ່ອນວັນທີ 30 ທັນວາ 2023 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດຳເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແນະນຳຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

ເຊັນແທນ ຫົວໜ້າກົມ
ຮອງຫົວໜ້າກົມ

ກະຊວງການຕ່າງປະເທດ
ກົມອາຊຽນ

ແສງພະອາທິດ ສະນຸກຕົນ